ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0801 /ອຄ.ກອຫ

ນະຄອນຫຼວງວຽງຈັນ, ວັນທີ 01 ກັນຍາ 2020

# ແຈ້ງການ

ເຖິງ : - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

- ຜູ້ອຳນວຍການໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການສືບຕໍ່ປະຕິບັດບັນດາມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

- ອີງຕາມແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 925/ຫສນຍ, ລົງວັນທີ 31 ສິງຫາ 2020 ວ່າດ້ວຍການສືບຕໍ່ປະຕິບັດ ບັນດາມາດຕະການຜ່ອນຜັນ, ປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ໃນໄລຍະແຕ່ວັນທີ 01-30 ກັນຍາ 2020.
- ອີງຕາມຄຳແນະນຳຂອງຄະນະສະເພາະກິດ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0524/ອຄ.ສພກ, ລົງວັນທີ 2 ມິຖຸນາ 2020.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:**

1. ໃຫ້ສືບຕໍ່ປະຕິບັດ ບັນດາມາດຕະການຜ່ອນຜັນ, ປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຄືກັນກັບບັນດາມາດຕະການທີ່ໄດ້ປະຕິບັດໃນເດືອນສິງຫາ 2020 ຜ່ານມາ ຕາມທີ່ໄດ້ລະບຸໃນແຈ້ງການຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0722/ອຄ.ກອຫ, ລົງວັນທີ 6 ສິງຫາ 2020 ກ່ຽວກັບການສືບຕໍ່ປະຕິບັດບັນດາມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.
2. ການນຳເຂົ້າຊ່ຽວຊານ, ວິຊາການ ຫຼື ແຮງງານຈາກຕ່າງປະເທດ ໃຫ້ປະຕິບັດຕາມຄຳແນະນຳສຳລັບການເດີນທາງເຂົ້າ-ອອກ ສປປ ລາວ ໃນໄລຍະດຳເນີນການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ທີ່ຄະນະສະເພາະກິດຂັ້ນສູນກາງ ວາງອອກໃນແຕ່ລະໄລຍະ.
3. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ສະຫຼຸບລາຍງານການຈັດຕັ້ງປະຕິບັດ ຂອງຕົນໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ໃນທຸກໆວັນທີ 25 ຂອງເດືອນ.
4. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດ ຢ່າງເຂັ້ມງວດດ້ວຍ.

ຮອງລັດຖະມົນຕີ

ຄະນະສະເພາະກິດ

ສົມຈິດ ອິນທະມິດ

- ສຳເນົາສົ່ງ:
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 1 ສະບັບ.
- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ 1 ສະບັບ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0801 /ອຄ.ກອຫ

ນະຄອນຫຼວງວຽງຈັນ, ວັນທີ 01 ກັນຍາ 2020

# ແຈ້ງການ

ເຖິງ : - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

- ຜູ້ອຳນວຍການໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການສືບຕໍ່ປະຕິບັດບັນດາມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

- ອີງຕາມແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 925/ຫສນຍ, ລົງວັນທີ 31 ສິງຫາ 2020 ວ່າດ້ວຍການສືບຕໍ່ປະຕິບັດ ບັນດາມາດຕະການຜ່ອນຜັນ, ປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ໃນໄລຍະແຕ່ວັນທີ 01-30 ກັນຍາ 2020.
- ອີງຕາມຄຳແນະນຳຂອງຄະນະສະເພາະກິດ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0524/ອຄ.ສພກ, ລົງວັນທີ 2 ມິຖຸນາ 2020.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:**

1. ໃຫ້ສືບຕໍ່ປະຕິບັດ ບັນດາມາດຕະການຜ່ອນຜັນ, ປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຄືກັນກັບບັນດາມາດຕະການທີ່ໄດ້ປະຕິບັດໃນເດືອນສິງຫາ 2020 ຜ່ານມາ ຕາມທີ່ໄດ້ລະບຸໃນແຈ້ງການຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0722/ອຄ.ກອຫ, ລົງວັນທີ 6 ສິງຫາ 2020 ກ່ຽວກັບການສືບຕໍ່ປະຕິບັດບັນດາມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.
2. ການນຳເຂົ້າຊ່ຽວຊານ, ວິຊາການ ຫຼື ແຮງງານຈາກຕ່າງປະເທດ ໃຫ້ປະຕິບັດຕາມຄຳແນະນຳສຳລັບການເດີນທາງເຂົ້າ-ອອກ ສປປ ລາວ ໃນໄລຍະດຳເນີນການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ທີ່ຄະນະສະເພາະກິດຂັ້ນສູນກາງ ວາງອອກໃນແຕ່ລະໄລຍະ.
3. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ສະຫຼຸບລາຍງານການຈັດຕັ້ງປະຕິບັດ ຂອງຕົນໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ ໃນທຸກໆວັນທີ 25 ຂອງເດືອນ.
4. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດ ຢ່າງເຂັ້ມງວດດ້ວຍ.

ຮອງລັດຖະມົນຕີ

ຄະນະສະເພາະກິດ

ກະຊວງອຸດສາຫະກຳ ແລະ ການຄ້າ ... ລັດຖະມົນຕີ

ສົມຈິດ ອິນທະມິດ

- ສຳເນົາສົ່ງ:
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 1 ສະບັບ.
- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ 1 ສະບັບ.